## ກຳມະການສະພາການແພດ ພ້ອມດ້ວຍຄະນະອຳນວຍການ ອປສ

## ລົງຢ້ຽມຢາມຄົນເຈັບ ຢູ່ໂຮງໝໍຄູ່ສັນຍາ.





ຕອນເຊົ້າວັນທີ 7 ຕຸລາ 2011 ຄະນະສະພາການແພດ ອົງການປະກັນສັງຄົມ ພາກວິສາຫະກິດ, ຄະນະກົມປະກັນສັງຄົມ,ຄະນະອຳນວຍການອປສ,ໄດ້ລົງພົບປະກັບຄະນະອຳນວຍການໂຮງໝໍມະໂຫສົດແລະໂຮງໝໍມິດຕະພາບ; ໃນການພົບປະຄັ້ງນີ້ຊີ້ນຳໂດຍທ່ານ ຮສຈ ດຣ. ຈັນພົມມາ ວົງສຳພັນ ປະທານສະພາການແພດ ອປສ ເປັນຜູ້ນຳພາຄະນະດັ່ງກ່າວ.ຈຸດປະສົງແມ່ນເພື່ອເປັນການຕິດຕາມຊຸກຍູ້ການບໍລິການຂອງໂຮງໝໍຄູ່ສັນຍາໃຫ້ດີຂື້ນເລື້ອຍໆ ແລະ ພ້ອມ ດຽວກັນນີ້ຄະນະດັ່ງກ່າວຍັງໄດ້ຢ້ຽມຢາມ, ໃຫ້ກຳລັງໃຈຄົນເຈັບຂອງສະມາຊິກປະກັນສັງຄົມທີ່ນອນປິ່ນປົວຢູ່ໂຮງໝໍຄູ່ສັນຍາໃນຄະນະຄອນຫຼວງວຽງຈັນ. ໃຫ້ກຽດຕ້ອນຮັບຄະນະດັ່ງກ່າວແມ່ນທ່ານ ຮສຈ ດຣ. ບຸນທະພານີ ບຸນຊ່ວຍ ຄະນະອຳນວຍການໂຮງໝໍ ມະໂຫສົດ, ທ່ານ ຮສຈ ດຣ. ວັນລ່ຽມ ບົວຣະວົງ ຜູ້ອຳນວຍການໂຮງໝໍມິດຕະພາບ ແລະ ພະນັກງານທີ່ກ່ຽວ ຂ້ອງຂອງສອງໂຮງໝໍກໍ່ໃຫ້ກຽດເຂົ້າຮ່ວມຕ້ອນຮັບຢ່າງພ້ອມພຽງ.